ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃ...
MODERN QUICK RELIAB...

ສໍານັກງານໃຫຍ່

ເລກທີ: 1072 /ທຄຕລ...2025...
ນະຄອນຫຼວງວຽງຈັນ, ວັນທີ:...07 APR 2025...

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາທ່ານຜູ້ສະໜອງ ທີ່ເປັນຕົວແທນຈໍາໜ່າຍປະເພດເຄື່ອງຈັກຄັດໄຈ້ເງິນ.

**ເລື່ອງ:** ເຊີນເຂົ້າຮ່ວມຍື່ນຊອງລາຄາເຊົ່າ ເຄື່ອງຈັກນັບ-ຄັດໄຈ້-ກວດເງິນປອມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານ ຜູ້ສະໜອງເຄື່ອງຈັກ ຍື່ນຊອງປະມູນ ເຄື່ອງຈັກທີ່ສາມາດ: ນັບເງິນ-ຄັດໄຈ້ເງິນ-ກວດເງິນປອມໄດ້ຫຼາຍສະກຸນ ເພື່ອປະກອບເປັນເຄື່ອງ ມືຮັບໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຢູ່ພາຍໃນນະຄອນຫຼວງ ແລະ ສາຂາຕ່າງແຂວງ, ດັ່ງ ລາຍການລຸ່ມນີ້:

| ລ/ດ | ລາຍການສິນຄ້າ / ສະເປັກສິນຄ້າ | ຈ/ນ (ເຄື່ອງ) | ໝາຍເຫດ |
|---|---|---|---|
| 1 | **<u>ເຄື່ອງຈັກນັບ-ຄັດໄຈ້ເງິນລຸ້ນ 2 (1+1) ຊ່ອງ</u>** | 15 | ພາຍໃນນະຄອນຫຼວງ |
| | - ຄວາມໄວຢ່າງໜ້ອຍ: ໂໝດນັບ-ຄັດ 600 ໃບ/ນາທີ ແລະ ສາມາດໃຊ້ງານເຄື່ອງຈັກຕໍ່ເນື່ອງໄດ້ ເກີນ 5 ຊົ່ວໂມງ.<br>- ຊ່ອງວາງເງິນນັບໄດ້ ຢ່າງໜ້ອຍ 500 ໃບ.<br>- ຊ່ອງ Reject ຮັບເງິນໄດ້ ຢ່າງໜ້ອຍ 100 ໃບ.<br>- ຊ່ອງຮັບເງິນທີ່ນັບແລ້ວ ຢ່າງໜ້ອຍ 200 ໃບ.<br>- ສາມາດກວດນັບ, ຄັດແຍກ ປະເພດໃບເງິນປົນ ແລະ ລຸ້ນປີ (ລຸ້ນເກົ່າ-ໃໝ່) ອອກຈາກກັນໄດ້.<br>- ສາມາດຮັບປະກັນໃນການກວດນັບໃຫ້ຖືກຕ້ອງຄົບຖ້ວນ (ຈໍານວນ 100) ໂດຍບໍ່ມີບັນຫາເກີດຂຶ້ນເຊັ່ນ: ເງິນເກີນ ຫຼື ເງິນບໍ່ພໍ.<br>- ນັບເງິນ ກວດເງິນປອມ ໄຈ້ເງິນ, ຈັດລຽງໜ້າເງິນໄດ້, ກວດຈັບເງິນທີ່ບໍ່ສົມບູນໄດ້ (ເງິນທີ່ຖືກຕັດຂອບ, ເງິນທີ່ຕິດສະກ໋ອດ).<br>- ສາມາດຮັບເງິນລຸ້ນເກົ່າ-ໃໝ່ ທັງເງິນກີບ ແລະ ເງິນຕາຕ່າງປະເທດ.<br>- ສາມາດຮັບຮອງການກວດ-ນັບເງິນ ໄດ້ທຸກສະກຸນເງິນ ທີ່ຂຶ້ນຢູ່ກະດານອັດຕາແລກປ່ຽນ ຂອງ ທຄຕລ (USD, THB, EUR, GBP, AUD, CAD, JPY, CHF, CNY, DKK, NOK, SEK, SGD, HKD, VND, KRW).<br>- ສາມາດອັບເດດຊອບແວເຄື່ອງ ເພື່ອຮອງຮັບເງິນລຸ້ນໃໝ່ ຕະຫຼອດອາຍຸສັນຍາ.<br>- ມີຈໍນອກເສີມ.<br>- ການຮັບປະກັນການເຖິງຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານຈັກໄດ້: ໃຫ້ຜູ້ສະໜອງລະບຸວົງເງິນທີ່ຮັບເຖິງແທນຄືນ ເພື່ອເປັນເງື່ອນໄຂໃຫ້ ທຄຕລ ພິຈາລະນາ.<br>- ມີຄູ່ມືການນໍາໃຊ້ຈັກ ຂັ້ນພື້ນຖານໃຫ້ແກ່ ທຄຕລ. | 39 | ຕ່າງແຂວງ |
| 2 | **<u>ເຄື່ອງຈັກນັບ-ຄັດໄຈ້ເງິນລຸ້ນ 4 ຊ່ອງ</u>** | 1 | ພາຍໃນນະຄອນຫຼວງ |
| | - ຄວາມໄວໃນການນັບຢ່າງໜ້ອຍ: 750 ໃບ/ນາທີ ແລະ ສາມາດໃຊ້ງານເຄື່ອງຈັກຕໍ່ເນື່ອງໄດ້ ເກີນ 5 ຊົ່ວໂມງ.<br>- ຊ່ອງວາງເງິນນັບໄດ້ ຢ່າງໜ້ອຍ 2,000 ໃບ. | 3 | ຕ່າງແຂວງ |



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | |
|---|---|---|---|
| | - ສາມາດກວດນັບ, ຄັດແຍກ ປະເພດໃບເງິນປົນ ແລະ ລຸ້ນປີ (ລຸ້ນເກົ່າ-ໃໝ່) ອອກຈາກກັນໄດ້.<br>- ສາມາດຮັບຮອງການກວດ-ນັບເງິນ ແລະ ຄັດແຍກ (ໄຈ້ປົນ, ເກົ່າ-ກາງ-ໃໝ່) ໄດ້ທຸກສະກຸນ ທີ່ຂຶ້ນຢູ່ກະດານອັດຕາແລກ ປ່ຽນ ຂອງ ທຄຕລ (USD, THB, EUR, GBP, AUD, CAD, JPY, CHF, CNY, DKK, NOK, SEK, SGD, HKD, VND, KRW).<br>- ນັບເງິນ ກວດເງິນປອມ ໄຈ້ເງິນ, ຈັດລຽງໜ້າເງິນໄດ້, ກວດຈັບເງິນທີ່ບໍ່ສົມບູນໄດ້ (ເງິນທີ່ຖືກຕັດຂອບ, ເງິນທີ່ຕິດສະກ໋ອດ).<br>- ສາມາດຄັດແຍກຕ່າງສະກຸນເງິນພ້ອມກັນໄດ້.<br>- ສາມາດຮັບເງິນລຸ້ນເກົ່າ-ໃໝ່ ທັງເງິນກີບ ແລະ ເງິນຕາຕ່າງປະເທດ.<br>- ສາມາດອັບເດດຊອບແວເຄື່ອງ ເພື່ອຮອງຮັບເງິນລຸ້ນໃໝ່ ຕະຫຼອດອາຍຸສັນຍາ.<br>- ສາມາດຄັດແຍກເງິນໄດ້ຕາມສະພາບ ທີ່ທະນາຄານຕ້ອງການເກົ່າ, ກາງ, ໃໝ່.<br>- ການຮັບປະກັນການເງິນຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານຈັກໄດ້: ໃຫ້ຜູ້ສະໜອງລະບຸວົງເງິນທີ່ຮັບເງິນແທນຄືນ ເພື່ອເປັນເງື່ອນໄຂໃຫ້ ທຄຕລ ພິຈາລະນາ.<br>- ມີຄູ່ມືການນໍາໃຊ້ຈັກ ຂັ້ນພື້ນຖານໃຫ້ແກ່ ທຄຕລ. | | |
| 3 | <u>**ເຄື່ອງຈັກນັບ-ຄັດໄຈ້ເງິນລັ້ນ 8 ຊ່ອງ**</u><br>- ຄວາມໄວໃນການນັບຢ່າງໜ້ອຍ: 750 ໃບ/ນາທີ ແລະ ສາມາດໃຊ້ງານເຄື່ອງຈັກຕໍ່ເນື່ອງໄດ້ ເກີນ 5 ຊົ່ວໂມງ.<br>- ຊ່ອງວາງເງິນນັບໄດ້ ຢ່າງໜ້ອຍ 2,000 ໃບ.<br>- ສາມາດກວດນັບ, ຄັດແຍກ ປະເພດໃບເງິນປົນ ແລະ ລຸ້ນປີ (ລຸ້ນເກົ່າ-ໃໝ່) ອອກຈາກກັນໄດ້.<br>- ສາມາດຮັບຮອງການກວດ-ນັບເງິນ ແລະ ຄັດແຍກ (ໄຈ້ປົນ, ເກົ່າ-ກາງ-ໃໝ່) ໄດ້ທຸກສະກຸນ ທີ່ຂຶ້ນຢູ່ກະດານອັດຕາແລກ ປ່ຽນ ຂອງ ທຄຕລ (USD, THB, EUR, GBP, AUD, CAD, JPY, CHF, CNY, DKK, NOK, SEK, SGD, HKD, VND, KRW).<br>- ນັບເງິນ ກວດເງິນປອມ ໄຈ້ເງິນ, ຈັດລຽງໜ້າເງິນໄດ້, ກວດຈັບເງິນທີ່ບໍ່ສົມບູນໄດ້ (ເງິນທີ່ຖືກຕັດຂອບ, ເງິນທີ່ຕິດສະກ໋ອດ).<br>- ສາມາດຄັດແຍກຕ່າງສະກຸນເງິນພ້ອມກັນໄດ້.<br>- ສາມາດກວດນັບເງິນລຸ້ນເກົ່າ-ໃໝ່ ທັງເງິນກີບ ແລະ ເງິນຕາຕ່າງປະເທດ.<br>- ສາມາດອັບເດດຊອບແວເຄື່ອງ ເພື່ອຮອງຮັບເງິນລຸ້ນໃໝ່ ຕະຫຼອດອາຍຸສັນຍາ.<br>- ສາມາດຄັດແຍກເງິນໄດ້ຕາມສະພາບ ທີ່ທະນາຄານຕ້ອງການເກົ່າ, ກາງ, ໃໝ່.<br>- ການຮັບປະກັນການເງິນຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານຈັກໄດ້: ໃຫ້ຜູ້ສະໜອງລະບຸວົງເງິນທີ່ຮັບເງິນແທນຄືນ ເພື່ອເປັນເງື່ອນໄຂໃຫ້ ທຄຕລ ພິຈາລະນາ.<br>- ມີຄູ່ມືການນໍາໃຊ້ຈັກ ຂັ້ນພື້ນຖານໃຫ້ແກ່ ທຄຕລ. | 1<br>1 | ພາຍໃນນະຄອນຫຼວງ<br>ຕ່າງແຂວງ |

- <u>**ເງື່ອນໄຂການເຊັນສັນຍາສໍາລັບຈັກ 3 ລຸ້ນຂ້າງເທິງແມ່ນ:**</u>
  - ການເຊັນສັນຍາເຊົ່າ ແມ່ນ 03 ປີ/ເຄື່ອງ.
  - ການຊໍາລະເງິນແມ່ນ 06 ເດືອນ/ຄັ້ງ (2 ຄັ້ງ/ປີ).
  - ການບໍາລຸງຮັກສາຈັກ 03 ເດືອນ/ຄັ້ງ (4 ຄັ້ງ/ປີ), ສໍາລັບການເຄື່ອນຍ້າຍຈັກຢູ່ຕ່າງແຂວງ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
  - ໄລຍະເວລາການແກ້ໄຂ ກໍລະນີຈັກເພ່ສຸກເສີນ: ນະຄອນຫຼວງແມ່ນບໍ່ໃຫ້ເກີນ 1 ວັນ, ຕ່າງແຂວງບໍ່ເກີນ 3 ວັນ.
- **ໝາຍເຫດ:** ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງກໍ່ໄດ້, ສ່ວນການພິຈາລະ ນາແມ່ນ **ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ,** ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າພຽງຢ່າງດຽວ

***ເງື່ອນໄຂສຳລັບຜູ້ທີ່ສົນໃຈເຂົ້າຮ່ວມປະມູນຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

- **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

  1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງຈັກນັບເງິນ, ຕ້ອງມີວິຊາການກ່ຽວກັບເຄື່ອງຈັກດັ່ງກ່າວໂດຍສະເພາະ, ສຳເນົາໃບທະບຽນວິສາຫະກິດ (ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ), ໃບຢັ້ງຢືນການເສຍອາກອນປີ 2021, 2022, 2023 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.
  2. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນສຸກ, ທີ 11/04/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍ pdf ເຂົ້າ E-mail: procurement@bcel.com.la

- **ເອກະສານ ຊອງທີ 2 (ປິດຊອງ):**

  1. ໃບສະເໜີລາຄາໃຫ້ລະບຸເປັນເງິນກີບ, ລວມອາກອນມູນຄ່າເພີ່ມ (ລາຄາ/ໜ່ວຍ, ລາຄາລວມ)
  2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຢ່າງໜ້ອຍ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/07/2025) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສືຄ້ຳປະກັນດັ່ງກ່າວຄືນພາຍໃນ 10 ວັນ.
  3. **ວັນພະຫັດ, ວັນທີ 24/04/2025, ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ, ສະນັ້ນ ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5/2 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກ ຕ້ອງຕາມການກຳນົດຂ້າງເທິງ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ພະແນກຫ້ອງການບໍລິຫານ-ການເງິນ:
ໂທ: 213200 ຕໍ່ 414;
020 5533 4674; 020 5835 1522

# (ຕົວຢ່າງ) ລາຍລະອຽດການປະມູນຈັກ ຄັດໄຈ້ເງິນ

| ລ/ດ | ສະຖານທີ່ | ເງື່ອນໄຂ | | | | | | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2022-24 | ປະສົບການກ່ຽວກັບການສະໜອງຈັກ (ຈັກປີ) | ເຄີຍສະໜອງຈັກໃຫ້ອົງກອນໃດແນ່ | ໃບອະນຸຍາດເປັນຕົວແທນ | ຍີ່ຫໍ້ສິນຄ້າ | ຄຸນນະພາບສິນຄ້າ | Serial number record (ມີຫຼືບໍ່?) | ມີຈໍເສີມ (ມີຫຼືບໍ່?) | ການອັບເດດ Software | ປີ-ປະເທດຜະລິດ | ກຳນົດເວລາສົ່ງ (ຈັກວັນ) | ການບຳລຸງ | ກໍລະນີເງິນປອມຜ່ານ | ຈ/ນ | |
| | ນະຄອນຫຼວງ | | | | | | | | | | | | | | | | |
| 1 | | | | 7Y | ✓ | ✓ | | ຕົວຢ່າງສຳລັບການຕື່ມຂໍ້ມູນ<br>' - ຈັກນັບເງິນ 2 ຊ່ອງ (1+1)<br>- ນັບເງິນ ກວດເງິນປອມ ໄຈ້ເງິນ-ລຽງໜ້າເງິນ<br>- ກວດເງິນປອມໄດ້ 10 ສະກຸນເງິນ (ທຄຕລ ເລືອກໄດ້)<br>- ຄວາມໄວໃນການນັບ 1.200 ໃບ/ນາທີ<br>- ຄວາມໄວໃນການຄັດ 1.000 ໃບ/ນາທີ<br>- ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 200 ໃບ | ✓ | ✓ | Free ຕະ ຫຼອດໄລຍະການເຊົ່າ, ລວມທັງການອັບເດດສະກຸນເງິນ+ທະນາບັດໃໝ່ | | | ..... ຄັ້ງ/ປີ | ..... Usd | 1 | |
| 2 | | | | | | | | ຕົວຢ່າງສຳລັບການຕື່ມຂໍ້ມູນ<br>' - ຈັກນັບເງິນ 4 , 8 ຊ່ອງ<br>- ນັບເງິນ ກວດເງິນປອມ ໄຈ້ເງິນ-ລຽງໜ້າເງິນ<br>- ກວດເງິນປອມໄດ້ 10 ສະກຸນເງິນ (ທຄຕລ ເລືອກໄດ້)<br>- ຄວາມໄວໃນການນັບ 1.200 ໃບ/ນາທີ<br>- ຄວາມໄວໃນການຄັດ 1.000 ໃບ/ນາທີ<br>- ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 200 ໃບ | ✓ | ✓ | Free ຕະ ຫຼອດໄລຍະການເຊົ່າ, ລວມທັງການອັບເດດສະກຸນເງິນ+ທະນາບັດໃໝ່ | | | ..... ຄັ້ງ/ປີ | ..... Usd | 1 | |
| | ຕ່າງແຂວງ | | | | | | | | | | | | | | | | |
| 1 | | | | 7Y | ✓ | ✓ | | ຕົວຢ່າງສຳລັບການຕື່ມຂໍ້ມູນ<br>' - ຈັກນັບເງິນ 2 ຊ່ອງ (1+1)<br>- ນັບເງິນ ກວດເງິນປອມ ໄຈ້ເງິນ-ລຽງໜ້າເງິນ<br>- ກວດເງິນປອມໄດ້ 10 ສະກຸນເງິນ (ທຄຕລ ເລືອກໄດ້)<br>- ຄວາມໄວໃນການນັບ 1.200 ໃບ/ນາທີ<br>- ຄວາມໄວໃນການຄັດ 1.000 ໃບ/ນາທີ<br>- ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 200 ໃບ | ✓ | ✓ | Free ຕະ ຫຼອດໄລຍະການເຊົ່າ, ລວມທັງການອັບເດດສະກຸນເງິນ+ທະນາບັດໃໝ່ | | | ..... ຄັ້ງ/ປີ | ..... Usd | 1 | ບໍລິສັດລົງໄປຫາຈັກຢູ່ຕ່າງແຂວງ ຫຼື ຝາກຈັກມາ ນຄຫຼ (ໃຫ້ລະບຸ) |
| 2 | | | | | | | | ຕົວຢ່າງສຳລັບການຕື່ມຂໍ້ມູນ<br>' - ຈັກນັບເງິນ 4 , 8 ຊ່ອງ<br>- ນັບເງິນ ກວດເງິນປອມ ໄຈ້ເງິນ-ລຽງໜ້າເງິນ<br>- ກວດເງິນປອມໄດ້ 10 ສະກຸນເງິນ (ທຄຕລ ເລືອກໄດ້)<br>- ຄວາມໄວໃນການນັບ 1.200 ໃບ/ນາທີ<br>- ຄວາມໄວໃນການຄັດ 1.000 ໃບ/ນາທີ<br>- ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 200 ໃບ | ✓ | ✓ | Free ຕະ ຫຼອດໄລຍະການເຊົ່າ, ລວມທັງການອັບເດດສະກຸນເງິນ+ທະນາບັດໃໝ່ | | | ..... ຄັ້ງ/ປີ | ..... Usd | 1 | ບໍລິສັດລົງໄປຫາຈັກຢູ່ຕ່າງແຂວງ ຫຼື ຝາກຈັກມາ ນຄຫຼ (ໃຫ້ລະບຸ) |